# ຂ່າວປອມກ່ຽວກັບ ສະພາບອາກາດ ແລະ ສິ່ງແວດລ້ອມ

ຄວາມຈິງ ກັບ ຂ່າວສານປອມ





ຂໍ້ມູນທີ່ຜິດພາດ ຫຼື ຂ່າວປອມກ່ຽວກັບການປ່ຽນແປງດິນຟ້າ
ອາກາດ ແລະ ສິ່ງແວດລ້ອມສ້າງຄວາມສັບສົນໃຫ້ຄົນເຮົາ
ກ່ຽວກັບສິ່ງທີ່

ກຳລັງເກີດຂຶ້ນຢ່າງແທ້ຈິງ ຕໍ່ໂລກຂອງພວກເຮົາ

ຂໍ້ມູນອ້າງອີງທີ່ບໍ່ຖືກຕ້ອງໃນໂຊຊຽວມີເດຍ ແລະ ລາຍການຂ່າວ
ເຮັດໃຫ້ຄົນເຊື່ອວ່ານັກວິທະຍາສາດບໍ່ໄດ້ຄິດເຫັນຕົງກັນ
ເລື່ອງການປ່ຽນແປງດິນຟ້າອາກາດ,
ໃນຂະນະທີ່ນັກວິຊາການສ່ວນໃຫຍ່ຢັ້ງຢືນວ່າມັນເປັນຄວາມຈິງ
ແລະ ຮ້າຍແຮງກໍ່ຕາມ



# ຜົນກະທົບຂອງຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງຕໍ່ສະພາບອາກາດ ແລະ ສິ່ງແວດລ້ອມ

ບໍລິສັດບາງແຫ່ງສະແຫວງຫາກໍາໄລຈາກນໍ້າມັນເຊື້ອໄຟ ຟອດຊິວ ແລະ ຖ່ານຫີນ ເປັນຜູ້ມອບເງິນໃຫ້ກັບໂຄງການຂ່າວປອມ, ປ່ຽນແປງຄວາມຈິງ ບິດເບືອນຂ່າວກ່ຽວກັບທາງສິ່ງແວດລ້ອມ ແລະ ເຮັດໃຫ້ແນວທາງການແກ້ໄຂບັນຫາທາງສິ່ງແວດລ້ອມສີຂຽວ ເບິ່ງຄືວ່າບໍ່ສາມາດເປັນໄປໄດ້.

ຄວາມສັບສົນດັ່ງກ່າວສາມາດຂັດຂວາງການດໍາເນີນການແກ້ໄຂ ແລະ ເຮັດໃຫ້ທຸກຄົນມີຄວາມສ່ຽງຕໍ່ເຫດການສະພາບອາກາດທີ່ຮຸນແຮງຫຼາຍຂຶ້ນ.

# ກົນອຸບາຍຂອງຂ່າວປອມກ່ຽວກັບສິ່ງແວດລ້ອມ



### ພວກເຂົາຈະເລືອກຂໍ້ມູນທີ່ເປັນປະໂຫຍດກັບຕົນເອງ

ເບິ່ງສະເພາະຫລັກຖານ ທີ່ສະໜັບສະໜູນມຸມມອງ ຂອງຕົນເອງ



### ດຶງດູດໄປກັບຄວາມຮູ້ສຶກ

ເຮັດໃຫ້ຄົນຢ້ານກົວວ່າການ ປ່ຽນແປງສີຂຽວຈະມີຜົນກະທົບຕໍ່ ຊີວິດຂອງພວກເຂົາ.



### ວິທະຍາສາດທີ່ບໍ່ແມ່ນຄວາມຈິງ

ອີງການບາງແຫ່ງທີ່ມີຄວາມສໍາພັນ ກັບອຸດສາຫະກໍາພະລັງງານ ຟອສຊິວ ໄດ້ໃຫ້ທຶນກັບການສຶກສາທາງວິທະຍາສາດ ທີ່ບໍ່ຖືກຕ້ອງ ຫຼື ບໍ່ແມ່ນການຄົ້ນຄວ້າ ທີ່ເຄັ່ງຄັດ

# ແຫຼ່ງຂ່າວສານປອມຊັ້ນນຳກ່ຽວກັບສະພາບອາກາດ ແລະ ສິ່ງແວດລ້ອມ

### → ຮູບແບບສື່ສັງຄົມອອນລາຍ

ຂ່າວປອມຖືກເຜີຍແຜ່ໃນ Facebook ແລະ TikTok ຢ່າງໄວວາ. ໃນປີ 2021, ມີການເບິ່ງຂ່າວສານປອມກ່ຽວກັບສະພາບອາກາດໃນ Facebook ຫຼາຍກວ່າ 1.3 ລ້ານຄັ້ງຕໍ່ມື້.

### → ເວັບໄຊທີ່ໃຫ້ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ

ເປັນແຫຼ່ງຂ່າວທີ່ບໍ່ຖືກຕ້ອງໃນຫຼາຍໆຫົວຂໍ້ ພວກເຂົາລຳອຽງ ແລະ ບໍ່ໄດ້ລາຍງານໂດຍອີງຈາກຂໍ້ມູນຄວາມຈິງ

### → ອົງການທີ່ປ່ອຍມົນລະພິດ

ບາງເທື່ອບໍລິສັດໃຫຍ່ໆອາດຈະເປັນຜູ້ຢູ່ເບື້ອງຫຼັງຂ່າວປອມ ເພາະພວກເຂົາບໍ່ຕ້ອງການ ໃຫ້ມີການຄວບຄຸມເພີ່ມຕື່ມຕໍ່ອຸດສາຫະກຳ ຂອງພວກເຂົາ.

### → ບຸກຄົນສາທາລະນະ

ບຸກຄົນທີ່ມີຊື່ສຽງບາງຄົນເຮັດໃຫ້ຜູ້ຊົມເຂົ້າໃຈຜິດ. ຂໍ້ມູນຄວາມຈິງຂອງເຂົາເຈົ້າແມ່ນຜິດ, ແຕ່ປະຊາຊົນເຊື່ອພວກເຂົາຍ້ອນວ່າ ສິດອຳນາດຂອງເຂົາເຈົ້າ.

# ຄຳອ້າງທີ່ບໍ່ແມ່ນຄວາມຈິງກ່ຽວກັບສະພາບອາກາດ ແລະ ສິ່ງແວດລ້ອມ

"ພາວະໂລກຮ້ອນບໍ່ໄດ້ເກີດຂຶ້ນ"

"ພະລັງງານທົດແທນບໍ່ມີປະສິດທິພາບ"

"ນີ້ແມ່ນລະດູໜາວທີ່ໜາວທີ່ສຸດໃນຮອບຫຼາຍປີ! ພາວະໂລກຮ້ອນກໍ່ເກີດຂຶ້ນເຊັ່ນກັນ."

"ນັກວິທະຍາສາດບໍ່ໄດ້ເຫັນດີວ່າພາວະໂລກຮ້ອນເປັນຄວາມຈິງ"

"ພືດ ແລະ ສັດສາມາດປັບຕົວໄດ້."

"ມັນຊ້າເກີນໄປທີ່ຈະເຮັດຫຍັງກ່ຽວກັບເລື່ອງນີ້ແລ້ວ."